ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.
ຫ້ອງການ

ເລກທີ 220 /ຫກ.

ນະຄອນຫຼວງວຽງຈັນ, ວັນທີ 6 ກຸມພາ 2025

# ແຈ້ງການປະມູນ

ເຖິງ: ບໍລິສັດ ກໍ່ສ້າງຂົວທາງ ແລະ ສ້ອມແປງທົ່ວໄປ.

**ເລື່ອງ:** ເຊີນເຂົ້າຮ່ວມປະມູນ ໂຄງການສ້ອມແປງທາງເບຕົງເສີມເຫຼັກ ພາຍໃນ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ;

- ອີງຕາມ ກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ **02 ພະຈິກ 2017**;
- ອີງຕາມແຜນງົບປະມານຂອງ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ປະຈຳປີ 2025 ສະບັບເລກທີ 3368/ກຜທ.ກຜ4, ລົງວັນທີ 26 ທັນວາ 2024;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ການແຕ່ງຕັ້ງຄະນະຮັບຜິດຊອບ ໂຄງການສ້ອມແປງທາງເບຕົງເສີມເຫຼັກ ພາຍໃນ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ; ສະບັບເລກທີ 73/ສມປຊ, ລົງວັນທີ 21 ມັງກອນ 2025.

ຫ້ອງການ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ຂໍຖືເປັນກຽດແຈ້ງມາຍັງບັນດາບໍລິສັດ, ບຸກຄົນ, ນິຕິບຸກຄົນຮັບຊາບ ເພື່ອເຂົ້າຮ່ວມໃນການປະມູນໂຄງການສ້ອມແປງທາງເບຕົງເສີມເຫຼັກ ພາຍໃນ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ; ເຊິ່ງປະກອບມີບັນດາມາດຖານເງື່ອນໄຂ ດັ່ງນີ້:

1. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດ ທີ່ມີຄຸນວຸດທິເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດທີ່ຖືກຕ້ອງຕາມກົດໝາຍ ທີ່ກ່ຽວພັນກັບການກໍ່ສ້າງສ້ອມແປງ, ຂົວທາງ ແລະ ກໍ່ສ້າງທົ່ວໄປ.
2. ບໍລິສັດທີ່ມີຄຸນວຸດທິເໝາະສົມ ແລະ ມີຄວາມສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ຫ້ອງການສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ພະແນກແຜນການ-ການເງິນ ຜູ້ຮັບຜິດຊອບຊື່: ນ. ລຸນນີ ໄໝທະວິເພັດ ເບີໂທ 020 55053102 ແລະ ທ ອຸ່ນເຮືອນ ວົງພະຈັນ ເບີ 020 56434441 ໃນໂມງລັດຖະການ.
3. ບໍລິສັດໃດທີ່ຕ້ອງການຊື້ຊອງປະມູນຕ້ອງມາພົວພັນກັບພະແນກແຜນການ-ການເງິນ ຂອງ ສມປຊ, ວັນທີເລີ່ມຂາຍຊອງແມ່ນນັບແຕ່ 7 ກຸມພາ 2025 ເປັນຕົ້ນໄປ, ໃນລາຄາ **2.000.000 ກີບ (ສອງລ້ານກີບ)** , ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດເທົ່ານັ້ນ.
4. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ 13 ມີນາ 2025 ທີ່ ຫ້ອງການສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ແລະ ຊອງປະມູນລາຄາທຸກໆ ຊອງຈະໄດ້ເປີດໃນເວລາ 09:30ໂມງ ຂອງວັນທີ 13 ມີນາ 2025 ໂດຍຊ່ອງໜ້າຄະນະຮັບຜິດຊອບໂຄງການ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈ.

Scanned with ACE Scanner

5. ທຸກໆຊອງປະມູນ ຕ້ອງໄດ້ມີໜັງສືຄໍ້າປະກັນການປະມູນດ້ວຍກຽດ ຫລື ໜັງສືຄໍ້າປະກັນການປະມູນຈາກທະນາຄານ ຫລື ເງິນສົດ ຢ່າງໜ້ອຍບໍ່ໃຫ້ຫລຸດ 02% ຂອງລາຄາທີ່ສະເໜີເຂົ້າປະມູນ.
6. ສະຖານທີ່ຫ້ອງປະຊຸມຊັ້ນ II ຕຶກຫ້ອງການ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ເບີໂທຕິດຕໍ່ 021 752001, 020 55053102 ຫລື 020 56434441.

ດັ່ງນັ້ນ, ຫ້ອງການສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ຈຶ່ງຂໍແຈ້ງມາຍັງບັນດາບໍລິສັດຕ່າງໆເຂົ້າຮ່ວມການປະມູນຕາມວັນເວລາດ້ວຍ .

ເຊັນແທນ ຫົວໜ້າຫ້ອງການ

ບຸນໜາ ສີຫາລາດ

Scanned with ACE Scanner